# ທະນາຄານພັດທະນາລາວມຸ່ງໜ້າປະຕິບັດນະໂຍບາຍ ສົ່ງເສີມ ແລະ ພັດທະນາ SME




**ໂດຍ : ຣັດສະໝີ ດວງສັດຈະ**

ໃນກອງປະຊຸມໃຫຍ່ຄັ້ງທີ VI ຂອງສະຫະພັນກຳມະບານທະນາຄານແຫ່ງ ສປປລາວ ເມື່ອວັນທີ 10 ກໍລະກົດ ຜ່ານມານີ້,ສະຫາຍ ເຂັມເພັດ ມະນີວົງ ປະທານຄະນະກຳມະບານຮາກຖານທະນາຄານພັດທະນາລາວ ( ທພລ ) ໄດ້ຢືນຢັນເຖິງການປະກອບສ່ວນອັນຕັ້ງໜ້າ ແລະ ສົມກຽດຂອງພະນັກງານ ແລະ ສະມາຊິກກຳມະບານເຂົ້າໃນໝາກຜົນແຫ່ງການຈັດຕັ້ງປະຕິບັດ ແລະ ນະໂຍບາຍສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍແລະ ຂະໜາດກາງ ( SME ) ໃນໄລຍະເວລາສາມປີຄື ນັບແຕ່ປີ 2008 ເປັນຕົ້ນມາ.

ທະນາຄານພັດທະນາລາວ ເປັນທະນາຄານທຸລະກິດຂອງລັດໂດຍໄດ້ໃຫ້ການບໍລິການສິນເຊື່ອໃຫ້ເງິນກູ້ທຸລະກິດ SME, ໃຫ້ເງິນກູ້ສໍາລັບບຸກຄົນທົ່ວໄປ, ເງິນກູ້ສໍາລັບເພື່ອທີ່ພັກພາອາໄສ, ເງິນກູ້ເປັນທຶນໝູນວຽນ, ໃຫ້ເງິນກູ້ແບບເບີກເກີນບັນຊີ, ເງິນກູ້ເພື່ອເປີດໜັງສືສິນເຊື່ອເພື່ອການຄ້າຂາເຂົ້າ ( L/C ) ແລະ ໜັງສືຄໍ້າປະກັນຕ່າງໆ ມີທັງໄລຍະສັ້ນ, ກາງ ແລະ ຍາວ ດ້ວຍສະກຸນເງິນກີບ, ບາດ ແລະ ໂດລາສະຫະລັດ, ເປົ້າໝາຍຕົ້ນຕໍໃນການປ່ອຍສິນເຊື່ອຂອງ ທພລ ແມ່ນເພື່ອສົ່ງເສີມ-ພັດທະນາ SME ໃນຂະແໜງການເສດຖະກິດ ແນໃສ່ເສີມສ້າງພື້ນຖານເສດຖະກິດຂອງຊາດໃຫ້ມີຄວາມເຂັ້ມແຂງ, ປະກອບສ່ວນສ້າງວຽກເຮັດງານທໍາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຕາມແນວທາງຂອງພັກ ແລະລັດຖະບານ.

ສະຫາຍເຂັມເພັດ ໄດ້ຢືນຢັນວ່າ: ໃນທຸກໆປີການປ່ອຍສິນເຊື່ອໃຫ້ແກ່ຂະແໜງການ SME ແມ່ນນັບມື້ເພີ່ມຂຶ້ນເປັນລໍາດັບເຊິ່ງມາຮອດເດືອນພຶດສະພາຂອງປີນີ້ ຈໍານວນລູກຄ້າSMEມີ 10.000 ກວ່າລາຍການ ແລະ ມີຍອດສິນເຊື່ອຫຼາຍກວ່າ 2.000 ຕື້ກີບ. ເມື່ອມາຫຼຽວເບິ່ງອັດຕາໜີ້ທີ່ບໍ່ເກີດດອກອອກຜົນລວມ (Glposc NPL) ເຊິ່ງເມື່ອກ່ອນແມ່ນມີບັນຫາແຕ່ມາເຖິງດຽວນີ້ຫຼຸດລົງເຫຼືອ 1,8% ແລະ ໃນສ່ວນອັດຕາສ່ວນ NPL ສຸດທິ (Net NPL) ກໍເທົ່າກັບ 1% ເຊິ່ງຕໍ່າກວ່າເກນທີ່ທະນາຄານກາງໄດ້ກໍານົດເພດານ NPL ສູງສຸດບໍ່ເກີນ 3%.

ໃນດ້ານຜະລິດຕະພັນໃໝ່ ກໍປະກອບດ້ວຍເງິນກູ້ສໍາລັບບຸກຄົນທົ່ວໄປ, ເງິນກູ້ສໍາລັບເພື່ອທີ່ພັກພາອາໄສ (Housing loan), ການບໍລິການເງິນຝາກມີກໍານົດໄດ້ໃຫ້ຜົນຕອບແທນແກ່ຜູ້ຝາກເປັນດອກເບ້ຍທຸກເດືອນ, ນອກນີ້ ທພລ ກໍາລັງຕິດຕັ້ງລະບົບບັນຊີໃຫຍ່ ເຊິ່ງຈະສາມາດໃຫ້ບໍລິການແບບ (Online) ແລະ ກໍາລັງດໍາເນີນການຕິດຕັ້ງລະບົບຕູ້ ATM ເຊິ່ງຈະສາມາດເປີດໃຫ້ບໍລິການໃນທ້າຍປີນີ້.

ໃນສະເພາະໜ້ານີ້ຄະນະກໍາມະບານຮາກຖານ ແລະ ສະມາຊິກກໍາມະບານຍັງຈະສືບຕໍ່ຈັດຕັ້ງປະຕິບັດຕາມວິໄສທັດ ແລະ ເປົ້າໝາຍທີ່ກໍານົດໄວ້ແຕ່ນີ້ຫາປີ 2015 ໂດຍ ທຫລ ເລັ່ງໃສ່ໃຫ້ສິນເຊື່ອເພື່ອການສົ່ງເສີມ ແລະ ພັດທະນາ SME ໃຫ້ເປັນອັນດັບໜຶ່ງໃນ ສປປລາວ, ເຊິ່ງຄາດໝາຍໃນປີ 2015 ຈະສູ້ຊົນໃຫ້ຜູ້ປະກອບການ SME ທັງໝົດສາມາດເຂົ້າເຖິງແຫຼ່ງທຶນໃຫ້ໄດ້ 95 % ຂອງ SME, ສ້າງໃຫ້ມີຫຼາຍຜະລິດຕະພັນສິນເຊື່ອເພື່ອບໍລິການ SME ໃຫ້ມີຫຼາຍຂຶ້ນ, ສ້າງບຸກຄະລາກອນທີ່ມີຄວາມສາມາດສະເພາະດ້ານການບໍລິການ SME ແລະ ຈະສ້າງໃຫ້ມີກົນໄກການຄຸ້ມຄອງຄຸນນະພາບສິນເຊື່ອໃຫ້ດີທີ່ສຸດ.

ທັງໝົດນີ້ຄືຜົນງານອັນພົ້ນເດັ່ນໃນໄລຍະຜ່ານມາ ແລະ ກໍມີບັນຫາທ້າທາຍທີ່ຢືນຢູ່ຕໍ່ໜ້າບົນເສັ້ນທາງແຫ່ງການເດີນໄປສູ່ເສັ້ນທາງ SME ແລະ ເຊື່ອໝັ້ນວ່າ : ດ້ວຍບົດຮຽນ ແລະ ປະສົບການແບບມືອາຊີບຂອງບັນດາພະນັກງານ ແລະ ສະມາຊິກກຳມະບານກໍຄືການຊີ້ນຳ-ນຳພາ ແລະ ສ້າງທຸກເງື່ອນໄຂຂອງຄະນະພັກຮາກຖານ ທພລ ແລະ ຄະນະອຳນວຍການຈະກ້າວໄປສູ່ຜົນສຳເລັດ ແລະ ໄຊຊະນະຢ່າງແນ່ນອນ, ປະກອບສ່ວນນຳເອົາ ທຶນຮອນເຂົ້າສ້າງສັງຄົມ ແລະ ສ້າງທຸກຫົວໜ່ວຍ SME ໃຫ້ກ້າວໜ້າ ແລະ ນຳເອົາຄວາມຈະເລີນສີວິໄລ ແລະ ຄວາມຜາສຸກມາສູ່ປະເທດຊາດ,ສູ່ປະຊາຊົນລາວບັນດາເຜົ່າຕາມແນວທາງຂອງພັກ ແລະ ລັດຖະບານ.